MAHATHUEN LEASING PUBLIC COMPANY

628 , PHONPHANAO VILLAGE , KM5 , KAISONEPHOMVIHANH ROAD ,XAYSETTHA DISTRICT VIENTIANE CAPITAL , LAO PDR

TEL 021 418062 – 418066

ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2018
ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

<u>ວັນ, ເວລາ ແລະ ສະຖານທີ່:</u>

ກອງປະຊຸມໄດ້ຈັດຂຶ້ນໃນວັນທີ 26 ເມສາ 2019 ເວລາ 9:30 ໂມງທີ່ ຄອນເວັນຊັນ ເຊັນເຕີ, ຊັ້ນ4, ຫ້ອງໄຂ່ມຸກ (Pearl room) ໂຮງແຮມແລນມາກ ແມ່ຂອງ ລີເວີໄຊທ໌, ບ້ານ ທາດຂາວ ເມືອງ ສີສັດຕະນາກ ນະຄອນຫຼວງວຽງຈັນ

<u>ເລີ່ມເປີດກອງປະຊຸມ:</u>

ທ່ານ ຊາຄຣິດ ນັກສອນ ປະທານສະພາບໍລິຫານ ເປັນປະທານກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2018 ໃນຄັ້ງນີ້. ກອງປະຊຸມມີຜູ້ຖືຮຸ້ນເຂົ້າຮ່ວມປະຊຸມທັງໝົດ 47 ທ່ານ, ແບ່ງເປັນຜູ້ຖືຮຸ້ນທີ່ເຂົ້າຮ່ວມປະຊຸມດ້ວຍຕົນເອງຈຳນວນ 22 ທ່ານ ແລະ ຜູ້ຖືຮຸ້ນທີ່ມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນຈຳນວນ 25 ທ່ານ ຖືຮຸ້ນລວມ 32.316.584 ຮຸ້ນ ຄິດເປັນ 80,79 % ຂອງຈຳນວນຮຸ້ນທັງໝົດຂອງບໍລິສັດ, ຖືວ່າຄົບອົງປະຊຸມຕາມລະບຽບກົດໝາຍ, ປະທານ ຈຶ່ງໄດ້ກ່າວເປີດກອງປະຊຸມ ແລະ ໄດ້ມອບໝາຍໃຫ້ພິທີກອນແນະນຳສະມາຊິກສະພາບໍລິຫານ ລວມທັງເຈົ້າໜ້າທີ່ ທີ່ກ່ຽວຂ້ອງແຕ່ລະທ່ານທີ່ເຂົ້າຮ່ວມກອງປະຊຸມ ຊຶ່ງມີລາຍລະອຽດ ດັ່ງນີ້:

- **<u>ສະພາຊິກສະພາບໍລິຫານ:</u>**

1.	ທ່ານ ຊາຄຣິດ ນັກສອນ	ປະທານສະພາບໍລິຫານ
2.	ທ່ານ ນາງ ອິນທະວິໄລ ອຸດົມ	ຮອງປະທານສະພາບໍລິຫານ
3.	ທ່ານ ມານິບ ຕຣີລິດວິໄລ	ສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການໃຫ່ຍ
4.	ທ່ານ ນາງ ປຣາດຖະໜາ ນັກສອນ	ສະມາຊິກສະພາບໍລິຫານ
5.	ທ່ານ ນາງ ສຸລິດາ ນັກສອນ	ສະມາຊິກສະພາບໍລິຫານ
6.	ທ່ານ ກຽງໄກ ນິດສະຍັນ	ສະມາຊິກສະພາບໍລິຫານ
7.	ທ່ານ ສັງຄົມ ຈັນສຸກ	ສະມາຊິກສະພາບໍລິຫານອິດສະຫຼະ
8.	ທ່ານ ນັນທະພັດ ງາມປັ່ງ	ສະມາຊິກສະພາບໍລິຫານອິດສະຫຼະ
9.	ທ່ານ ທິຣະເມດ ວຸດທິພັດພິບູນ	ສະມາຊິກສະພາບໍລິຫານອິດສະຫຼະ

- **<u>ຜູ້ບໍລິຫານ ທີ່ເຂົ້າຮ່ວມກອງປະຊຸມ:</u>**

1.	ທ່ານ ທອງຖະຫວັນ ທອງແຖມ	ຮັກສາການຮອງຜູ້ອຳນວຍການດ້ານການເງິນ
2.	ທ່ານ ຊັດພົນໄຊ ປັນຍາທຳບະດີ	ຮອງຜູ້ອຳນວຍການດ້ານດຳເນີນການ
3.	ທ່ານ ນາງ ສະລັນຍາ ທອງແຖມນະອະຍຸດທະຍາ	ຜູ້ຈັດການພະແນກ ການເງິນ ແລະ ບໍລິການງານທະບຽນ
4.	ທ່ານ ນາງ ສຸລິພອນ ສຸວັນໄຊລິບ	ຜູ້ຈັດການພະແນກ ບັນຊີ ແລະ ໄອຊີທີ

- **<u>ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ:</u>**

1.	ທ່ານ ອະລາພອນ ກຽງສູນທອນກິດ	ຜູ້ຕາງໜ້າຈາກ ບໍລິສັດ ດີລອຍທ໌(ຈຳກັດ) ຈຳກັດຜູ້ດຽວ
2.	ທ່ານ ພິໄຊ ສະມິດ	ຜູ້ຕາງໜ້າຈາກ ບໍລິສັດ ດີລອຍທ໌(ຈຳກັດ) ຈຳກັດຜູ້ດຽວ

3. ທ່ານ ນາງ ສຸລິພອນ ສຸວັນໄຊລິບ ໃນນາມຄະນະກຳມະການກວດກາການດຳເນີນກອງປະຊຸມ ແລະ ລົງຄະແນນສຽງ
4. ທ່ານ ປະກາສິດ ດວງປະສິດ ໃນນາມຄະນະກຳມະການກວດກາການດຳເນີນກອງປະຊຸມ ແລະ ລົງຄະແນນສຽງ
5. ທ່ານ ນາງ ຕຸກຕົ່ນ ສີວັນທອງ ຜູ້ຖືຮຸ້ນລາຍຍ່ອຍຂອງ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ,ໃນນາມຄະນະກຳມະການກວດກາການດຳເນີນກອງປະຊຸມ ແລະ ລົງຄະແນນສຽງ
6. ທ່ານ ນາງ ອາລຸນນາ ສີວົງທອງ ຜູ້ຕາງໜ້າຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ໃນນາມຫົວໜ້າຄະນະຕິດຕາມແລະປະເມີນການດຳເນີນກອງປະຊຸມສາມັນຜູ້ຖືຮຸ້ນ
7. ທ່ານ ນາງ ທິດາພອນ ແສງສີຣິຈັນ ຜູ້ຕາງໜ້າຈາກຕະຫຼາດຫຼັກຊັບລາວ, ໃນນາມຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມສາມັນຜູ້ຖືຮຸ້ນ
8. ທ່ານ ນາງ ອັນນິດາ ວໍລະວົງ ຜູ້ຕາງໜ້າຈາກຕະຫຼາດຫຼັກຊັບລາວ, ໃນນາມຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມສາມັນຜູ້ຖືຮຸ້ນ
9. ທ່ານ ນາງ ມະລິ ໄຊຍະວົງ ຜູ້ຖືຮຸ້ນລາຍຍ່ອຍຂອງ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ, ໃນນາມຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມສາມັນຜູ້ຖືຮຸ້ນ

ຫຼັງຈາກນັ້ນ ພິທີກອນໄດ້ອະທິບາຍວິທີການລົງຄະແນນສຽງ ແລະ ລາຍງານແຕ່ລະວາລະໃຫ້ຜູ້ຖືຮຸ້ນໄດ້ຮັບຊາບ ດັ່ງນີ້:

1. ວິທີການລົງຄະແນນສຽງ
   - ທ່ານຜູ້ຖືຮຸ້ນໜຶ່ງທ່ານມີຄະແນນສຽງເທົ່າກັບຈຳນວນຮຸ້ນທີ່ທ່ານຖືຢູ່ໂດຍໜຶ່ງຮຸ້ນເທົ່າກັບໜຶ່ງສຽງ
   - ໃນການລົງຄະແນນສຽງໃນແຕ່ລະວາລະ ປະທານຈະໄດ້ສອບຖາມຜູ້ຖືຮຸ້ນວ່າ ມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ ຫຼື ບໍ່ຮັບຮອງໃນວາລະນັ້ນ ຖ້າຫາກບໍ່ເຫັນດີແມ່ນໃຫ້ລົງຄະແນນໃສ່ໃນບັດລົງຄະແນນສຽງໃນວາລະນັ້ນໆ ທີ່ເຈົ້າໜ້າທີ່ໄດ້ແຈກຢາຍໃຫ້ກ່ອນເຂົ້າກອງປະຊຸມພ້ອມທັງຍົກບັດດັ່ງກ່າວຂຶ້ນສູງໆ ຈົນກວ່າຈະມີເຈົ້າໜ້າທີ່ມາເກັບບັດລົງຄະແນນເພື່ອໄປກວດນັບຄະແນນສຽງ ແລະ ສຳລັບຜູ້ຖືຮຸ້ນທີ່ບໍ່ໄດ້ຍົກບັດຖືວ່າຜູ້ຖືຮຸ້ນທ່ານນັ້ນ ມີມະຕິເຫັນດີຕາມທີ່ສະເໜີໃນທີ່ປະຊຸມ
   - ສຳລັບຜູ້ຖືຮຸ້ນທີ່ມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນ ແລະ ໃຫ້ຜູ້ຕາງໜ້າລົງຄະແນນສຽງ ຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຕາມທີ່ຜູ້ຖືຮຸ້ນໄດ້ລະບຸໄວ້ໃນໃບມອບສິດ, ບໍລິສັດໄດ້ນຳເອົາການລົງຄະແນນສຽງຕາມທີ່ຜູ້ຖືຮຸ້ນລະບຸໄວ້ໃນໃບມອບສິດດັ່ງກ່າວ ໄປບັນທຶກລວມຄະແນນໄວ້ລ່ວງໜ້າໃນເວລາຜູ້ຕາງໜ້າລົງທະບຽນເປັນທີ່ຮຽບຮ້ອຍແລ້ວ ເພື່ອເປັນຄວາມສະດວກໃຫ້ແກ່ຜູ້ຕາງໜ້າບໍ່ຕ້ອງລົງຄະແນນສຽງໃນບັດລົງຄະແນນໃນກອງປະຊຸມ

2. ການນັບຄະແນນສຽງ
   - ການນັບຄະແນນສຽງໃນແຕ່ລະວາລະ ຈະນັບຄະແນນສຽງທີ່ບໍ່ເຫັນດີຂອງຜູ້ຖືຮຸ້ນໃນກອງປະຊຸມ ແລະ ຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນຕາມທີ່ບໍລິສັດໄດ້ບັນທຶກໄວ້ລ່ວງໜ້າ ໃນເວລາທີ່ຜູ້ຕາງໜ້າ

ລົງທະບຽນເຂົ້າຮ່ວມກອງປະຊຸມ ໂດຍນຳມາຫັກອອກຈາກຈຳນວນຮຸ້ນທັງໝົດຂອງຜູ້ເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງໃນແຕ່ລະວາລະ

- ປະທານຈະປະກາດຜົນການລົງຄະແນນສຽງໃນແຕ່ລະວາລະໃຫ້ກອງປະຊຸມໄດ້ຮັບຊາບຫຼັງຈາກລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງ. ໃນກໍລະນີຜູ້ຖືຮຸ້ນໄດ້ສົ່ງບັດລົງຄະແນນສຽງບໍ່ເຫັນດີ ພາຍຫຼັງຈາກທີ່ປະທານໄດ້ປະກາດໃຫ້ກອງປະຊຸມຮັບຊາບຜົນການລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງແລ້ວນັ້ນ, ບໍລິສັດ ຈະບໍ່ໄດ້ນຳເອົາຄະແນນສຽງດັ່ງກ່າວ ມານັບເປັນຄະແນນສຽງຕື່ມອີກ

ທ່ານ ປະທານ ກອງປະຊຸມໄດ້ດຳເນີນກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2018 ໂດຍລາຍງານເປັນແຕ່ລະວາລະ ຊຶ່ງມີລາຍລະອຽດ ດັ່ງນີ້:

ວາລະທີ 1 ພິຈາລະນາຮັບຮອງລາຍງານການປະຊຸມສາມັນຜູ້ຖືຮຸ້ນປະຈຳປີໃນຄັ້ງທີ່ຜ່ານມາ

ທ່ານ ຊາຄຣິດ ນັກສອນ, ປະທານສະພາບໍລິຫານ ໄດ້ສະເໜີຕໍ່ກອງປະຊຸມ ໃຫ້ພິຈາລະນາລາຍງານການປະຊຸມສາມັນຜູ້ຖືຮຸ້ນປະຈຳປີໃນຄັ້ງທີ່ຜ່ານມາ ໂດຍເປັນການປະຊຸມກ່ອນການເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ.

ປະທານ ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນໄດ້ສອບຖາມກ່ຽວກັບວາລະດັ່ງກ່າວ, ເມື່ອບໍ່ມີຜູ້ຖືຮຸ້ນທ່ານໃດສອບແລ້ວ ປະທານ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາລາຍງານການປະຊຸມສາມັນຜູ້ຖືຮຸ້ນປະຈຳປີໃນຄັ້ງທີ່ຜ່ານມາ ຊຶ່ງໄດ້ປະຊຸມໃນວັນທີ 09 ມີນາ 2018 ໂດຍວາລະນີ້ກອງປະຊຸມຈະຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີ ຈຳນວນ 0 ສຽງ ຄິດເປັນ 0 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງເຫັນດີ ຈຳນວນ 32.316.584 ສຽງ ຄິດເປັນ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ

<u>ມະຕິ:</u> ກອງປະຊຸມສາມັນຜູ້ຖືຮຸ້ນຮັບຮອງລາຍງານການປະຊຸມສາມັນຜູ້ຖືຮຸ້ນປະຈຳປີໃນຄັ້ງທີ່ຜ່ານມາ

ວາລະທີ 2 ພິຈາລະນາຮັບຮອງບົດສະຫຼຸບລາຍງານກ່ຽວກັບການດຳເນີນທຸລະກິດຂອງບໍລິສັດ ແລະ ລາຍງານປະຈຳປີ 2018

ທ່ານ ຊາຄຣິດ ນັກສອນ, ປະທານສະພາບໍລິຫານ ໄດ້ມອບໝາຍໃຫ້ ທ່ານ ມານິບ ຕຣີລິດວິໄລ, ສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການໃຫ່ຍ ເປັນຜູ້ນຳສະເໜີກ່ຽວກັບ ບົດສະຫຼຸບລາຍງານກ່ຽວກັບການດຳເນີນທຸລະກິດຂອງ ບໍລິສັດ ແລະ ລາຍງານ ປະຈຳປີ 2018 ຊຶ່ງມີລາຍລະອຽດ ດັ່ງນີ້:

- ສິ້ນສຸດວັນທີ 30 ທັນວາ 2018 ທຽບກັບ ຜົນການດຳເນີນການ ປະຈຳປີ 2017

	2017	2018	ຜົນຕ່າງ
ກຳໄລສຸດທິ(ກ່ອນອາກອນ)	6.895,2	8.791,7	+ 1.896,5
ອາກອນນິຕິບຸກຄົນ	- 1.456,5	- 2.198,1	- 741.6
ກຳໄລສຸດທິ (ຫຼັງອາກອນ)	5.438,7	6.593,6	+ 1.154.9

ຫົວໜ່ວຍ: ລ້ານກີບ

- ຈຳນວນສັນຍາໃໝ່ຕົວຈິງ ທຽບກັບ ປີ 2017

	ປີ 2017	ປີ 2018	ຜົນຕ່າງ
ຈຳນວນສັນຍາ (ຄັ້ນ)	3,718	5,439	+ 1,721
ຈຳນວນເງິນໃຫ້ສິນເຊື່ອ(ລ້ານກີບ)	36,088.1	58,898.0	+ 22,809.9

- ສະຖານະການເງິນ

ວັນທີ 31 ທັນວາ 2018

- ຊັບສິນລວມ 71,713.6 ລ້ານກີບ
- ໜີ້ສິນລວມ 6,902.9 ລ້ານກີບ
- ສ່ວນຂອງຜູ້ຖືຮຸ້ນ 64,810.7 ລ້ານກີບ
- ລາຍໄດ້ລວມ 20,283.5 ລ້ານກີບ
- ຄ່າໃຊ້ຈ່າຍລວມ 11,291.7 ລ້ານກີບ
- ກຳໄລກ່ອນອາກອນ 8,791.7 ລ້ານກີບ
- ກຳໄລສຸດທິ 6,593.6 ລ້ານກີບ

ປະທານ ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນໄດ້ສອບຖາມກ່ຽວກັບວາລະດັ່ງກ່າວ, ເມື່ອບໍ່ມີຜູ້ຖືຮຸ້ນທ່ານໃດສອບແລ້ວ ປະທານ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາບົດສະຫຼຸບລາຍງານກ່ຽວກັບການດຳເນີນທຸລະກິດຂອງ ບໍລິສັດ ແລະ ລາຍງານ ປະຈຳປີ 2018 ໂດຍວາລະນີ້ກອງປະຊຸມຈະຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າ ເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີ ຈຳນວນ 0 ສຽງ ຄິດເປັນ 0 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງເຫັນດີ ຈຳນວນ 32.316.584 ສຽງ ຄິດເປັນ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ

<u>ມະຕິ:</u> ກອງປະຊຸມສາມັນຜູ້ຖືຮຸ້ນຮັບຮອງບົດສະຫຼຸບລາຍງານກ່ຽວກັບການດຳເນີນທຸລະກິດຂອງບໍລິສັດ ແລະ ລາຍງານ ປະຈຳປີ 2018

ວາລະທີ 3 ພິຈາລະນາຮັບຮອງເອກະສານງານການເງິນຂອງບໍລິສັດ ປະຈຳປີ 2018

ທ່ານ ຊາຄຣິດ ນັກສອນ, ປະທານສະພາບໍລິຫານ ໄດ້ມອບໝາຍໃຫ້ ທ່ານ ມານິບ ຕຣີລິດວິໄລ, ສະມາຊິກ ສະພາບໍລິຫານ ແລະ ຜູ້ອຳນວຍການໃຫ່ຍ ເປັນຜູ້ນຳສະເໜີກ່ຽວກັບ ເອກະສານງານການເງິນຂອງບໍລິສັດ ປະຈຳປີ 2018 ສຳລັບລາຍລະອຽດຂອງເອກະສານງານການເງິນຂອງບໍລິສັດ ປະຈຳປີ 2018 ແມ່ນ ຕາມເອກະສານທີ່ໄດ້ຄັດຕິດກັບໜັງສືເຊີນ ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2018

ປະທານ ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນໄດ້ສອບຖາມກ່ຽວກັບວາລະດັ່ງກ່າວ, ເມື່ອບໍ່ມີຜູ້ຖືຮຸ້ນທ່ານໃດສອບແລ້ວ ປະທານ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາເອກະສານງານການເງິນຂອງບໍລິສັດ ປະຈຳປີ 2018 ໂດຍ ວາລະນີ້ກອງປະຊຸມຈະຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມ ກອງປະຊຸມ

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີ ຈຳນວນ 0 ສຽງ ຄິດເປັນ 0 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງເຫັນດີ ຈຳນວນ 32.316.584 ສຽງ ຄິດເປັນ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ

<u>ມະຕິ:</u> ກອງປະຊຸມສາມັນຜູ້ຖືຮຸ້ນຮັບຮອງເອກະສານງົບການເງິນຂອງບໍລິສັດ ປະຈຳປີ 2018

ວາລະທີ 4 ພິຈາລະນາອະນຸມັດແຜນການດຳເນີນງານ, ເງິນເດືອນຂອງພະນັກງານ ແລະ ງົບລົງທຶນຂອງບໍລິສັດ ປະຈຳປີ 2019

ທ່ານ ຊາຄຣິດ ນັກສອນ, ປະທານສະພາບໍລິຫານ ໄດ້ມອບໝາຍໃຫ້ ທ່ານ ມານົບ ຕຣີລິດວົໄລ, ສະມາຊິກ ສະພາບໍລິຫານ ແລະ ຜູ້ອຳນວຍການໃຫ່ຍ ເປັນຜູ້ນຳ ສະເໜີກ່ຽວກັບ ແຜນການດຳເນີນງານ, ເງິນເດືອນຂອງພະນັກງານ ແລະ ງົບລົງທຶນຂອງບໍລິສັດ ປະຈຳປີ 2019 ຊຶ່ງມີລາຍລະອຽດດັ່ງນີ້:

ປະມານການຕາມແຜນການດຳເນີນການ ປະຈຳປີ 2019 ຄາດວ່າຈະມີກຳໄລສຸດທິຫຼັງອາກອນເພີ່ມຂຶ້ນໃນ ອັດຕາ 65 ສ່ວນຮ້ອຍ ຈາກກຳໄລສຸດທິ(ຫຼັງອາກອນ) ປະຈຳປີທີ່ຜ່ານມາ

- ດ້ານການຕະຫຼາດ

ບໍລິສັດມີແຜນທີ່ຈະເພີ່ມຈຳນວນສັນຍາ(ຄັນ) ສິນເຊື່ອປະມານ 45 ສ່ວນຮ້ອຍ ຈາກປີ 2018 ສ່ວນຈຳນວນເງິນ ໃຫ້ສິນເຊື່ອ ຈະເພີ່ມຂຶ້ນ 50 ສ່ວນຮ້ອຍ ຊຶ່ງເປັນລະດັບດຽວກັນກັບປີ 2018. ມີກົນລະຍຸຫຼັກ ດັ່ງນີ້:

1) ຮັກສາສ່ວນແບ່ງທາງການຕະຫຼາດໃນນະຄອນຫຼວງວຽງຈັນ
2) ຂະຫຍາຍພື້ນທີ່ໃຫ້ບໍລິການໃນແຂວງສະຫວັນນະເຂດ
3) ສ້າງຕັ້ງສາຂາໃໝ່ ຈຳນວນ 1 ຫາ 2 ແຫ່ງໃນເມືອງທີ່ມີຄວາມພ້ອມ
4) ເລີ່ມໃຫ້ບໍລິການສິນເຊື່ອທາງດ້ານເຄື່ອງໃຊ້ໄຟຟ້າ, ໂທລະສັບມືຖື ແລະ ອື່ນໆ
5) ພັດທະນາຊ່ອງທາງການຕະຫຼາດໃໝ່ຜ່ານຊ່ອງທາງສື່ສານອອນໄລນ໌(Social Media) ແລະ ເທັກໂນໂລຍີໃໝ່

- ເງິນກູ້ຢືມ

ຈາກແຜນການດຳເນີນທຸລະກິດປີ 2019 ບໍລິສັດຕ້ອງການຂະຫຍາຍທຸລະກິດເພີ່ມອີກ ບໍ່ພຽງແຕ່ການໃຫ້ ບໍລິການສິນເຊື່ອລົດຈັກຢ່າງດຽວ ແຕ່ຈະໄດ້ມີການໃຫ້ບໍລິການສິນເຊື່ອທາງດ້ານເຄື່ອງໃຊ້ໄຟຟ້າ, ໂທລະສັບມືຖື ແລະ ອື່ນໆ ອີກ. ສະນັ້ນ, ບໍລິສັດຈຶ່ງຕ້ອງການເງິນກູ້ຢືມປະມານ 30.000 ລ້ານກີບ ເພື່ອເຮັດໃຫ້ບັນລຸຕາມແຜນທີ່ວາງໄວ້.

- ດ້ານການລົງທຶນ

ຫົວຂໍ້ການລົງທຶນ	kip
ການຕົກແຕ່ງສຳນັກງານ ແລະ ອາຄານ	50,000,000
ພາຫະນະ (ລົດໃຫ່ຍ ແລະ ລົດກະບະ)	495,000,000
ຮາດແວຂອງຄອມພິວເຕີ້ ແລະ ອຸປະກອນອື່ນໆ	50,000,000
Application Software	225,000,000
ເຄື່ອງຄອມພິວເຕີ້, ອຸປະກອນຕໍ່ພ້ວງ ແລະ ທົດແທນ	143,750,000
ອຸປະກອນຮັບໃຊ້ຫ້ອງການ ແລະ ທົດແທນ	125,000,000
ການລົງທຶນສຳລັບສາຂາໃໝ່ (ສິ່ງອຳນວຍຄວາມສະດວກ+ອຸປະກອນ)	50,000,000
ອື່ນໆ	-
Total	**1,138,750,000**

- ດ້ານພະນັກງານ

ພະນັກງານ	**persons**
ຈຳນວນຜູ້ບໍລິຫານລະດັບສູງ	4
ຈຳນວນຜູ້ບໍລິຫານລະດັບກາງ	11
ຈຳນວນຫົວໜ້າໜ່ວຍງານ	12
ຈຳນວນພະນັກງານທົ່ວໄປ	95
ທັງໝົດ	**122**

- ດ້ານເງິນເດືອນຂອງພະນັກງານ

ຕາມແຜນງານໄດ້ມີການໃຫ້ປັບເງິນເດືອນພະນັກງານ ແລະ ຜູ້ອຳນວຍການໃຫ່ຍ ປະຈຳປີ 2019 ໃນອັດຕາ ບໍ່ເກີນ 5,36 ສ່ວນຮ້ອຍຂອງອັດຕາເງິນເດືອນລວມ ທີ່ເດືອນ ທັນວາ 2018 ໂດຍໄດ້ຜ່ານການອະນຸມັດຈາກສະພາບໍລິຫານ

ປະທານ ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນໄດ້ສອບຖາມກ່ຽວກັບວາລະດັ່ງກ່າວ, ເມື່ອບໍ່ມີຜູ້ຖືຮຸ້ນທ່ານໃດສອບແລ້ວ ປະທານ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາອະນຸມັດແຜນການດຳເນີນງານ, ເງິນເດືອນຂອງ ພະນັກງານ ແລະ ງົບລົງທຶນຂອງບໍລິສັດ ປະຈຳປີ 2019 ໂດຍວາລະນີ້ກອງປະຊຸມຈະຕ້ອງລົງຄະແນນສຽງຮັບຮອງດ້ວຍ ຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີ ຈຳນວນ 0 ສຽງ ຄິດເປັນ 0 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງເຫັນດີ ຈຳນວນ 32.316.584 ສຽງ ຄິດເປັນ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ

<u>ມະຕິ:</u> ກອງປະຊຸມສາມັນຜູ້ຖືຮຸ້ນອະນຸມັດແຜນການດຳເນີນງານ, ເງິນເດືອນຂອງພະນັກງານ ແລະ ງົບລົງທຶນ ຂອງບໍລິສັດ ປະຈຳປີ 2019

ວາລະທີ 5 ພິຈາລະນາອະນຸມັດແນວທາງການຈັດຫາແຫຼ່ງເງິນກູ້ຢືມ ເພື່ອໃຊ້ສຳລັບຂະຫຍາຍກິດຈະການຕາມແຜນການ ດຳເນີນງານ ປະຈຳປີ 2019

ທ່ານ ຊາຄຣິດ ນັກສອນ, ປະທານສະພາບໍລິຫານ ໄດ້ມອບໝາຍໃຫ້ ທ່ານ ມານິບ ຕຣີລິດວິໄລ, ສະມາຊິກ ສະພາບໍລິຫານ ແລະ ຜູ້ອຳນວຍການໃຫ່ຍ ເປັນຜູ້ນຳສະເໜີກ່ຽວກັບ ແນວທາງການຈັດຫາແຫຼ່ງເງິນກູ້ຢືມ ເພື່ອໃຊ້ສຳລັບ ຂະຫຍາຍກິດຈະການຕາມແຜນການດຳເນີນງານປະຈຳປີ 2019 ຊຶ່ງມີລາຍລະອຽດດັ່ງນີ້:

- ຕາມແຜນງານປະຈຳປີ 2019
  - ຕ້ອງໃຊ້ເງິນກູ້ຢືມເພື່ອຂະຫຍາຍກິດຈະການ ປະມານ 30.000 ລ້ານກີບ
  - ຄາດວ່າຈະມີກຳໄລສຸດທິຫຼັງອາກອນ ປະມານ 10.800 ລ້ານກີບ

- ແນວທາງການຫາເງິນກູ້ຂອງບໍລິສັດ
  - ກູ້ຢືມຈາກສະຖາບັນການເງິນ ທັງທີ່ມີຫຼັກຊັບຄ້ຳປະກັນ ຫຼື ບໍ່ມີຫຼັກຊັບຄ້ຳປະກັນ
  - ກູ້ຢືມໂດຍການອອກ Corporate Bond ທັງແບບມີຜູ້ຄ້ຳປະກັນ ແລະ ບໍ່ມີຜູ້ຄ້ຳປະກັນ
  - ກູ້ຢືມເງິນຈາກບຸກຄົນ ຫຼື ກຳມະການ ຫຼື ຜູ້ຖືຮຸ້ນ ທັງທີ່ມີຫຼັກປະກັນ ແລະ ບໍ່ມີຫຼັກປະກັນ

ປະທານ ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນໄດ້ສອບຖາມກ່ຽວກັບວາລະດັ່ງກ່າວ, ເມື່ອບໍ່ມີຜູ້ຖືຮຸ້ນທ່ານໃດສອບແລ້ວ ປະທານ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງອະນຸມັດແນວທາງການຈັດຫາແຫຼ່ງເງິນກູ້ຢືມ ເພື່ອໃຊ້ສຳລັບຂະຫຍາຍກິດຈະການຕາມແຜນການດຳເນີນງານ ປະຈຳປີ 2019 ໂດຍວາລະນີ້ກອງປະຊຸມຈະຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີ ຈຳນວນ 0 ສຽງ ຄິດເປັນ 0 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງເຫັນດີ ຈຳນວນ 32.316.584 ສຽງ ຄິດເປັນ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ

<u>ມະຕິ:</u> ກອງປະຊຸມສາມັນຜູ້ຖືຮຸ້ນອະນຸມັດແນວທາງການຈັດຫາແຫຼ່ງເງິນກູ້ຢືມ ເພື່ອໃຊ້ສຳລັບຂະຫຍາຍກິດຈະການຕາມແຜນການດຳເນີນງານ ປະຈຳປີ 2019 ແລະ ມອບໝາຍໃຫ້ ທ່ານ ມານິບ ຕຣີລິດວິໄລ, ຜູ້ອຳນວຍການໃຫ່ຍ ມີອຳນາດໃນການພິຈາລະນາ ແລະ ກຳນົດເງື່ອນໄຂຕ່າງໆໃນການກູ້ຢືມເງິນ ແລະ ເປັນຜູ້ລົງນາມໃນສັນຍາກູ້ຢືມ ໃນນາມຂອງ ບໍລິສັດ

ວາລະທີ 6 ພິຈາລະນາອະນຸມັດການຈັດສັນກຳໄລສຸດທິ ປະຈຳປີ 2018 ແລະ ວິທີແບ່ງປັນເງິນປັນຜົນ

ທ່ານ ຊາຄຣິດ ນັກສອນ, ປະທານສະພາບໍລິຫານ ໄດ້ມອບໝາຍໃຫ້ ທ່ານ ມານິບ ຕຣີລິດວິໄລ, ສະມາຊິກ ສະພາບໍລິຫານ ແລະ ຜູ້ອຳນວຍການໃຫ່ຍ ເປັນຜູ້ນຳສະເໜີກ່ຽວກັບ ການຈັດສັນກຳໄລສຸດທິ ປະຈຳປີ 2018 ແລະ ວິທີ ແບ່ງປັນເງິນປັນຜົນ ຊຶ່ງມີລາຍລະອຽດດັ່ງນີ້:

- ສະຫຼຸບການຈັດສັນກຳໄລສຸດທິ ປະຈຳປີ 2018 6.593.565.395 ກີບ
  - ສຳຮອງຕາມກົດໝາຍ 659.356.540 ກີບ 10,00 %
  - ຈ່າຍເງິນປັນຜົນ 5.880.000.000 ກີບ 89,18 %
  - ສະສົມໄວ້ໃນກຳໄລສະສົມ 54.208.855 ກີບ 0,82 %

- ມື້ປິດປຶ້ມບັນຊີທະບຽນຜູ້ຖືຄອງຮຸ້ນ ຂອງບໍລິສັດ ເພື່ອກຳນົດຜູ້ມີສິດໄດ້ຮັບເງິນປັນຜົນ ປະຈຳປີ 2018 ໃນ ວັນທີ 04 ເມສາ 2019

- ກຳນົດຈ່າຍເງິນປັນຜົນ ໃນອັດຕາ 147 ກີບຕໍ່ຮຸ້ນ ພາຍໃນ 30 ວັນ ຫຼັງຈາກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2018

ປະທານ ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນໄດ້ສອບຖາມກ່ຽວກັບວາລະດັ່ງກ່າວ, ເມື່ອບໍ່ມີຜູ້ຖືຮຸ້ນທ່ານໃດສອບແລ້ວ ປະທານ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງອະນຸມັດການຈັດສັນກຳໄລສຸດທິ ປະຈຳປີ 2018 ແລະ ວິທີ ແບ່ງປັນເງິນປັນຜົນ ໂດຍວາລະນີ້ກອງປະຊຸມຈະຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີ ຈຳນວນ 0 ສຽງ ຄິດເປັນ 0 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງເຫັນດີ ຈຳນວນ 32.316.584 ສຽງ ຄິດເປັນ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ

<u>ມະຕິ:</u> ກອງປະຊຸມສາມັນຜູ້ຖືຮຸ້ນອະນຸມັດການຈັດສັນກຳໄລສຸດທິປະຈຳປີ 2018ແລະວິທີແບ່ງປັນເງິນປັນຜົນ

ວາລະທີ 7 ພິຈາລະນາແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ກຳນົດຄ່າຕອບແທນສຳລັບການກວດສອບບັນຊີ ປະຈຳປີ 2019

ທ່ານ ຊາຄຣິດ ນັກສອນ, ປະທານສະພາບໍລິຫານ ໄດ້ມອບໝາຍໃຫ້ ທ່ານ ກຣຽງໄກ ນິດສະຍັນ, ສະມາຊິກສະພາບໍລິຫານ ແລະ ປະທານຄະນະກຳມະການກວດສອບ ເປັນຜູ້ນຳສະເໜີກ່ຽວກັບແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ກຳນົດຄ່າຕອບແທນສຳລັບການກວດສອບບັນຊີ ປະຈຳປີ 2019ຊຶ່ງມີລາຍລະອຽດດັ່ງນີ້:

ກອງປະຊຸມໄດ້ຂໍອະນຸມັດແຕ່ງຕັ້ງ ບໍລິສັດ ດີລອຍທ໌(ຈຳກັດ) ຈຳກັດຜູ້ດຽວ ເປັນຜູ້ກວດສອບບັນຊີ ປະຈຳປີ 2019 ແລະ ກຳນົດຄ່າຕອບແທນສຳລັບການກວດສອບບັນຊີ ຈຳນວນ 32.500 ໂດລາສະຫະລັດ ຍັງບໍ່ລວມຄ່າອາກອນ ແລະ Out of Pocket

ປະທານ ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນໄດ້ສອບຖາມກ່ຽວກັບວາລະດັ່ງກ່າວ, ເມື່ອບໍ່ມີຜູ້ຖືຮຸ້ນທ່ານໃດສອບແລ້ວ ປະທານ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ກຳນົດຄ່າຕອບແທນສຳລັບການກວດສອບບັນຊີ ປະຈຳປີ 2019 ໂດຍວາລະນີ້ກອງປະຊຸມຈະຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີ ຈຳນວນ 0 ສຽງ ຄິດເປັນ 0 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງເຫັນດີ ຈຳນວນ 32.316.584 ສຽງ ຄິດເປັນ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ

<u>ມະຕິ:</u> ກອງປະຊຸມສາມັນຜູ້ຖືຮຸ້ນອະນຸມັດແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ກຳນົດຄ່າຕອບແທນສຳລັບການກວດສອບບັນຊີ ປະຈຳປີ 2019

ວາລະທີ 8 ພິຈາລະນາອະນຸມັດກຳນົດເບ້ຍປະຈຳປີ, ເບ້ຍປະຊຸມ ແລະ ເງິນເດືອນຂອງຜູ້ອຳນວຍການ ປະຈຳປີ 2019

ທ່ານ ຊາຄຣິດ ນັກສອນ, ປະທານສະພາບໍລິຫານ ໄດ້ມອບໝາຍໃຫ້ ທ່ານ ມານິບ ຕຣີລິດວິໄລ, ສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການໃຫ່ຍ ເປັນຜູ້ນຳສະເໜີກ່ຽວກັບ ກຳນົດເບ້ຍປະຈຳປີ, ເບ້ຍປະຊຸມ ແລະ ເງິນເດືອນຂອງຜູ້ອຳນວຍການ ປະຈຳປີ 2019 ຊຶ່ງມີລາຍລະອຽດດັ່ງນີ້:

- ຂໍອະນຸມັດຈ່າຍບຳເໜັດປະຈຳປີ 2018

ກອງປະຊຸມອະນຸມັດຈ່າຍບຳເໜັດປະຈຳປີ 2018 ຈຳນວນບໍ່ເກີນ 217 ລ້ານກີບ ແລະ ມອບໝາຍໃຫ້ ສະພາບໍລິຫານ ແລະ ຄະນະກຳມະການກຳນົດຄ່າຕອບແທນເປັນຜູ້ດຳເນີນການຈັດສັນຕໍ່ໄປ.

- ຂໍອະນຸມັດກຳນົດຜົນຕອບແທນ, ເບ້ຍປະຊຸມ ແລະ ເງິນເດືອນຂອງຜູ້ອຳນວຍການ ປະຈຳປີ 2019

		ປະທານ	ກຳມະການ	ຫົວໜ່ວຍ
1	ຜົນຕອບແທນລາຍເດືອນ	11.250.000	6.250.000	ກີບ
2	ເບ້ຍປະຊຸມ: - ສະພາບໍລິຫານ - ຄະນະກຳມະການຊຸດຍ່ອຍ	 2.500.000 1.500.000	 1.500.000 1.000.000	 ກີບ ກີບ
3	ບຳເໜັດປະຈຳປີ	3 % ຈາກປະມານການກຳໄລສຸດທິປະຈຳປີ 2019 (ພິຈາລະນາປັບເພີ່ມ ຫຼື ຫຼຸດຕາມຜົນງານຈິງ)		

ຜົນຕອບແທນຂ້າງຕົ້ນ ຍັງບໍ່ລວມເງິນເດືອນຂອງຜູ້ອຳນວຍການໃຫ່ຍ ຊຶ່ງໄດ້ກຳນົດໄວ້ແລ້ວໃນແຜນງານ ປະຈຳປີ 2019 (ໃນວາລະທີ 4)

ປະທານ ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນໄດ້ສອບຖາມກ່ຽວກັບວາລະດັ່ງກ່າວ, ເມື່ອບໍ່ມີຜູ້ຖືຮຸ້ນທ່ານໃດສອບແລ້ວ ປະທານ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງອະນຸມັດກຳນົດເບ້ຍປະຈຳປີ, ເບ້ຍປະຊຸມ ແລະ ເງິນເດືອນ ຂອງຜູ້ອຳນວຍການ ປະຈຳປີ 2019 ໂດຍວາລະນີ້ກອງປະຊຸມຈະຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າ ເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີ ຈຳນວນ 0 ສຽງ ຄິດເປັນ 0 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງເຫັນດີ ຈຳນວນ 32.316.584 ສຽງ ຄິດເປັນ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ

<u>ມະຕິ:</u> ກອງປະຊຸມສາມັນຜູ້ຖືຮຸ້ນຮັບຮອງອະນຸມັດກຳນົດເບ້ຍປະຈຳປີ, ເບ້ຍປະຊຸມ ແລະ ເງິນເດືອນຂອງ ຜູ້ອຳນວຍການ ປະຈຳປີ 2019

ບໍ່ມີເລື່ອງອື່ນໆທີ່ຕ້ອງໃຫ້ກອງປະຊຸມຮັບຊາບ ແລະ ພິຈາລະນາ ປະທານຈຶ່ງກ່າວປິດກອງປະຊຸມໃນເວລາ 11:22 ໂມງ

ຮອງປະທານສະພາບໍລິຫານ

ທ່ານ ນາງ ອິນທະວີໄລ ອຸດົມ

<u>ກວດກາໂດຍ:</u>

ຜູ້ອຳນວຍການໃຫ່ຍ

ທ່ານ ມານົບ ຕຣີລິດວີໄລ

<u>ບັນທຶກໂດຍ:</u>

ທ່ານ ນາງ ສະລັນຍາ ທອງແຖມນະອະຍຸດທະຍາ